# ໃບອະນຸຍາດ ຊີແອັດເທີລ

*- ສ່ວນໜຶ່ງຂອງໝວດຊຸດຫລາຍພະແນກໃນການບໍລິການຕົວເມືອງ&ການອະນຸຍາດແບບຫຼາຍພະແນກ!*

## ດອກໄມ້ໄຟໃນງານພິທີການ

*ດັດແກ້ຂໍ້ມູນ, ຕຸລາ 2014*

ຕາມທຳມະດາແລ້ວ ການຈູດດອກໄມ້ໄຟແມ່ນບໍ່ອະນຸຍາດໃນເມືອງຊີແອັດເທີລ. ເຖິງຢ່າງໃດກໍ່ຕາມ, ໃນງານພິທີພິເສດ, ທ່ານສາມາດຂໍໃບອະນຸຍາດຈູດດອກໄມ້ໄຟບາງປະເພດທີ່ກຳນົດໄວ້ເພື່ອງານສະເຫຼີມສະຫຼອງຕ່າງໆໄດ້ຈາກພະແນກດັບເພີງເມືອງຊີແອັດເທີລ ໂດຍບໍ່ຕອ້ງເສຍຄ່າທຳນຽມ. ໃບອະນຸຍາດພິເສດແບບບໍ່ມີຄ່າທຳນຽມນີ້ມີການຈຳກັດປະເພດ, ວິທີການຈູດ, ເວລາແລະສະຖານທີ່ທີ່ຈະຈູດດອກໄມ້ໄຟນັ້ນ. ໃບອະນຸຍາດນີ້ມີລະຫັດໃບອະນຸຍາດແມ່ນ 107-SE.

### ປະເພດດອກໄມ້ໄຟທີ່ສາມາດຈູດໄດ້ຕາມໃບອະນຸຍາດ 107-SE

*ດອກໄມ້ໄຟທີ່ໄດ້ຮັບອະນຸຍາດໃຫ້ຈູດພາຍໃຕ້ໃບອະນຸຍາດ 107-SE*

ອະນຸຍາດໃຫ້ຈູດດອກໄມ້ໄຟແບບຈູດລະດັບພື້ນດິນ ແລະດອກໄມ້ໄຟທີ່ຈູດດ້ວຍມື ເຊັ່ນ: ດອກໄມ້ໄຟນ້ອຍໆ, ບັ້ງພຸ, ດອກໄມ້ໄຟນ້ຳພຸຊົງຈອຍ, ຄົບເພີງ, ບັ້ງກະໂພກ, ການຍິງສັນລະເສີນ, ບັ້ງກະໂພກແບບໄລ່ ແລະ ບັ້ງກະໂພກລູກໝາກຂ່າງ, ໝາກກະໂພກແລະການຍິງສັນລະເສີນເຮັດໃຫ້ເກີດສຽງດັງ ແລະແສງມາບ. ສ່ວນບັ້ງກະໂພກແບບໄລ່ຈະແລ່ນໄປຕາມພື້ນດິນແລະເຮັດໃຫ້ເກີດສຽງຄືກັບໝາກວິດ ຫຼືສຽງດັງແບບອື່ນໆ.

*ດອກໄມ້ໄຟທີ່ຕອ້ງຫ້າມ*

ພາຍໃຕ້ໃບອະນຸຍາດພິເສດນີ້ ບໍ່ອະນຸຍາດໃຫ້ຈູດດອກໄມ້ໄຟແບບຈູດເທິງອາກາດ ເຊັ່ນດອກໄມ້ໄຟທີ່ຍິງກາງອາກາດດ້ວຍເຮລິຄ້ອບເຕີ ແລະດອກໄມ້ໄຟຍິງຕໍ່ເນື່ອງເປັນຈັງຫວະດອກພຸນ້ອຍໆເທິງອາກາດ (Aerial spinner), ບັ້ງພຸຍິງຂຶ້ນເທິງທ້ອງຟ້າ (roman candles), ລູກພູລະເບີດມາຍ ເຊວລ໌ (mine shells), ບັ້ງພຸໃຫຍ່ແຕກໃນອາກາດ (aerial shells) ແລະປືນຄົກ (mortar).

### ຂັ້ນຕອນການຄຳຮອ້ງໃນການອະນຸມັດ

ການຂໍໃບອະນຸຍາດຈູດດອກໄມ້ໄຟ ທ່ານຈະຕ້ອງຍື່ນເອກະສານເປັນລາຍລັກອັກສອນຕໍ່ເຈົ້າໜ້າທີ່ດັບເພີງ ເມືອງຊີແອັດເທີລ ຢ່າງໜ້ອຍ 30 ວັນລ່ວງໜ້າກ່ອນການຈູດ. ບຸກຄົນທີ່ສາມາດຂໍໃບອະນຸຍາດໄດ້ຈະຕ້ອງມີອາຍຸຢ່າງໜ້ອຍ 18 ປີຂຶ້ນໄປ. ທ່ານຈຳເປັນຕ້ອງສະໜອງຂໍ້ມູນດັ່ງຕໍ່ໄປນີ້ເນື່ອງຈາກເປັນສ່ວນໜຶ່ງຂອງຂັ້ນຕອນໃນການຂໍໃບອະນຸຍາດ:

1. ຊື່ແລະທີ່ຢູ່ໄປສະນີຂອງໜ່ວຍງານຫຼືບຸກຄົນທີ່ຕ້ອງການຊື້ແລະຈູດດອກໄມ້ໄຟຕ່າງໆ.
2. ວັນທີແລະເວລາທີ່ຈະທຳການຈູດດອກໄມ້ໄຟ.
3. ສະຖານທີ່ທີ່ຕ້ອງການຈູດດອກໄມ້.
4. ຈຳນວນແລະປະເພດດອກໄມ້ໄຟທີ່ຕອ້ງການຊື້ແລະຈູດ.
5. ເຫດຜົນຫລືຈຸດປະສົງຂອງການຈູດດອກໄມ້ໄຟ
6. ລາຍເຊັນຂອງຜູ້ຮອ້ງຂໍ ພ້ອມດ້ວຍຄຳປະກາດນີ້: “ຜູ້ຮອ້ງຂໍເຂົ້າໃຈ ແລະເຫັນດີປະຕິບັດຕາມທຸກຂໍ້ກຳນົດ ຂອງການຮອ້ງຂໍແລະຂໍ້ກຳນົດຂອງໜ່ວຍງານທີ່ກ່ຽວຂອ້ງ,ແລະຜູ້ຮ້ອງຂໍຈະທຳການຈູດດອກໄມ້ໄຟໃນລັກສະນະທີ່ບໍ່ກໍ່ໃຫ້ເກີດອັນຕະລາຍຕໍ່ຜູ້ຄົນຫລືຊັບສິນ ຫລືເປັນການລົບກວນຕໍ່ຜູ້ອື່ນ ແລະຜູ້ຮ້ອງຂໍຍອມຮັບຄວາມຮັບຜິດຊອບຜົນທີ່ຕາມມາທັງໝົດຂອງການຈູດດອກໄມ້ໄຟທີ່ເກີດຈາກຄວາມຕັ້ງໃຈ ຫຼືບໍ່ຕັ້ງໃຈກໍ່ຕາມ”

ເອກະສານປະກອບການຂໍອະນຸຍາດທັງໝົດ ລວມທັງໃບອະນຸຍາດ 107-SE ມີຢູ່ໃນເວັບໄຊທ໌ຂອງເຮົາ: http://www.seattle.gov/fire/fmo/permits/permits.htm

### ຂໍ້ຈຳກັດເລື່ອງການໃຊ້ດອກໄມ້ໄຟໃນໃບອະນຸຍາດ 107-SE

ເຖິງແມ່ນວ່າຈະມີໃບອະນຸຍາດກໍ່ຕາມ, ກະລຸນາຮັບຊາບ ແລະເອົາໃຈໃສ່ຂໍ້ຈຳກັດຕໍ່ໄປນີ້ເມື່ອມີການຈູດດອກໄມ້ໄຟ:

1. ຜູ້ຖືໃບອະນຸຍາດຄືບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຊື້ສະເພາະດອກໄມ້ໄຟຕາມປະເພດແລະຈຳນວນທີ່ຈະຈູດຕາມທີ່ໄດ້ລະບຸເອົາໄວ້ພາຍໃຕ້ໃບອະນຸຍາດນີ້ເທົ່ານັ້ນ.
2. ການຈັດເກັບດອກໄມ້ໄຟອະນຸຍາດໃຫ້ທຳການຈັດເກັບດອກໄມ້ໄຟໄດ້ 3 ວັນກ່ອນວັນທີຈະຈູດເທົ່ານັ້ນ.
3. ດອກໄມ້ໄຟສາມາດຈູດໃນເວລາ, ວັນທີແລະສະຖານທີ່ທີ່ກຳນົດໃນການອະນຸຍາດເທົ່ານັ້ນ.
4. ດອກໄມ້ໄຟທີ່ບໍ່ໄດ້ຖືກໃຊ້ຈະຕອ້ງສົ່ງຄືນໃຫ້ແກ່ຜູ້ຂາຍສົ່ງດອກໄມ້ໄຟ ທີ່ມີໃບອະນຸຍາດອອກໃຫ້ໂດຍລັດວໍຊິງຕັນ ຫລືສົ່ງກັບສະຖານີຕຳຫລວດເມືອງຊີແອັດເທີລທີ່ໃກ້ສຸດ ຊ້າສຸດບໍ່ໃຫ້ກາຍ 3 ວັນຫລັງຈາກວັນທີໄດ້ຮັບອະນຸຍາດ.

5. ຜູ້ທີ່ໄດ້ຮັບອະນຸຍາດຕອ້ງປະຕິບັດຕາມເງື່ອນໄຂທັງໝົດຂອງ ການອະນຸຍາດ,ຮັກສາໃບອະນຸຍາດໄວ້ຕິດຕົວຕະຫຼອດສຳລັບ ການກວດສອບຈາກເຈົ້າໜ້າທີ່ກ່ຽວຂອ້ງຂອງລັດໃນ ສະຖານທີ່ຈູດດອກໄມ້ໄຟ.

## ການຊື້ດອກໄມ້ໄຟ

ເມື່ອທ່ານໄດ້ຮັບອະນຸຍາດຂອງພະແນກດັບເພີງເມືອງຊີແອັດເທີລ107-SE ແລ້ວ, ທ່ານອາດຈະມອບສຳເນົາໃບອະນຸຍາດໃຫ້ແກ່ຜູ້ຂາຍສົ່ງທີ່ໄດ້ຮັບອະນຸຍາດເພື່ອເປັນຫຼັກຖານການໄດ້ຮັບອະນຸຍາດໃຫ້ຊື້ດອກໄມ້ໄຟໄດ້. ທ່ານອາດຈະສາມາດຊື້ດອກໄມ້ໄຟໄດ້ຈາກຜູ້ຂາຍສົ່ງດອກໄມ້ໄຟທີ່ໄດ້ຮັບອະນຸຍາດ ຂອງລັດວໍຊິງຕັນເທົ່ານັ້ນ. ລາຍຊື່ຜູ້ຂາຍສົ່ງມີຢູ່ທີ່: www.wsp.wa.gov/fire/docs/fwlicensing/licwhole.pdf. ການສັ່ງຊື້ ຫຼືຮັບສິນຄ້າຈະເຮັດໃຫ້ບໍ່ໄດ້ຈົນກວ່າຜູ້ຊື້ຈະໄດ້ຮັບອະນຸຍາດກ່ອນ.

## ຂໍ້ມູນເພີ້ມ

ຖ້າທ່ານຕອ້ງການຂໍ້ມູນເພີ່ມເຕີມ, ກາລຸນາຕິດຕໍ່ເຈົ້າໜ້າທີ່ ຕຳຫລວດດັບເພີງຊີແອັດເທີລ. ໂທ: (206) 386-1450.

**ຂໍ້ປະຕິເສດຄວາມຮັບຜິດຊອບຕາມກົດໝາຍ:** *ການບັນທຶກຊ່ວຍເຫລືອລູກຄ້າ(CAM)ນີ້ບໍ່ຄວນຖືກນຳໃຊ້ແທນຂໍ້ບັງຄັບແລະກົດລະບຽບ. ແຕ່ລະບຸກຄົນແມ່ນຮັບຜິດຊອບໃນການປະຕິບັດຕາມທຸກຂໍ້ບັງຄັບແລະກົດລະບຽບທີ່ກ່ຽວຂອ້ງ ເຖິງແມ່ນວ່າຈະບໍ່ໄດ້ເວົ້າເຖິງໃນ CAM ນີ້ກໍ່ຕາມ.*